ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===000===---

ທະນາຄານແຫ່ງ ສປປ ລາວ

ກົມບັນຊີ-ການເງິນ

ເລກທີ : 332/ກບຊ

ນະຄອນຫຼວງວຽງຈັນ, ວັນທີ : 02 JUL 2013

# ແຈ້ງການ

**ເຖິງ:** - ທ່ານຜູ້ອຳນວຍການທະນາຄານທຸລະກິດລັດ.
- ທ່ານຜູ້ອຳນວຍການທະນາຄານຮ່ວມທຶນ.
- ທ່ານຜູ້ອຳນວຍການທະນາຄານເອກະຊົນ.
- ທ່ານຜູ້ອຳນວຍການທະນາຄານສາຂາຕ່າງປະເທດ.

**ເລື່ອງ:** ການກະກຽມຄວາມພ້ອມນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS).

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມບັນຊີ-ການເງິນສະບັບເລກທີ 04/ທຫລ, ລົງວັນທີ 25 ມີນາ 2005 .
- ອີງຕາມບົດບັນທຶກກອງປະຊຸມສະບັບເລກທີ 28/ທຫລ, ລົງວັນທີ 25 ມິຖຸນາ 2013.

ກົມບັນຊີ-ການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດລັດ, ທະນາຄານຮ່ວມທຶນ, ທະນາຄານເອກະຊົນ ແລະ ທະນາຄານສາຂາຕ່າງປະເທດ ໃຫ້ເປັນເຈົ້າການກະກຽມຄວາມພ້ອມຮອບດ້ານຂອງຕົນເພື່ອຮັບປະກັນການນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ໃນປີການບັນຊີ 2015; ສຳລັບທະນາຄານທຸລະກິດທີ່ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບແມ່ນໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ປີການບັນຊີ 2014 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອກະກຽມ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈນີ້ດ້ວຍ.

**ຫົວໜ້າກົມບັນຊີ-ການເງິນ**

ທະນາຄານແຫ່ງ ສປປ ລາວ ... ກົມບັນຊີ-ການເງິນ

**ນ. ຂັນແກ້ວ ຫຼ້ານະມິເງົາ**